


**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ **19** ສາຂາ ແລະ ຫຼາຍກວ່າ **80** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນໜຶ່ງ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

## ທຄຕລ ສາຂາ ອຸດົມໄຊ ຕ້ອງການຮັບພະນັກງານໃໝ່ ເພື່ອປະກອບໃຫ້ບັນດາຂະແໜງການພາຍໃນຈຳນວນ 03 ຄົນ

**ເງື່ອນໄຂຜູ້ສະໝັກ:** ເພດ: **ຊາຍ ຫຼື ຍິງ** ແລະ ມີອາຍຸບໍ່ເກີນ **30** ປີ.

- ✓ ມີໃບປະກາດຈົບຊັ້ນສູງຂຶ້ນໄປໃນສາຂາການເງິນ, ການທະນາຄານ, ບັນຊີ, ເສດຖະສາດ ແລະ ບໍລິຫານທຸລະກິດ ທີ່ມີຄະແນນ CGPA ໂດຍສະເລ່ຍ **2.70 ຫຼື 6.75/10** ຂຶ້ນໄປ.
- ✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ.
- ✓ ຖ້າຫາກສາມາດເວົ້າພາສາຈີນ, ຫວຽດນາມ, ຝຣັ່ງໄດ້ຍິ່ງເປັນການດີ.
- ✓ **ຕ້ອງເປັນຄົນທ້ອງຖິ່ນແຂວງອຸດົມໄຊ ຫຼື ມີທີ່ຢູ່ອາໃສຖາວອນຢູ່ແຂວງອຸດົມໄຊ.**
- ✓ ມີຄວາມຮູ້ພື້ນຖານການນຳໃຊ້ຄອມພິວເຕີ.
- ✓ ສາມາດເຮັດວຽກພາຍໃຕ້ໄລຍະເວລາທີ່ກຳນົດໃຫ້, ມີຄວາມອົດທົນຫ້າວຫັນ ແລະ ສາມາດເຮັດວຽກເປັນທີມໄດ້.

**ຄຸນລັກສະນະຜູ້ສະໝັກ:**

- ✓ ຊື່ສັດບໍລິສຸດ, ມະນຸດສຳພັນດີ
- ✓ ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ .
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.

## ວິທີສະໝັກວຽກ:

1) ຜູ້ທີ່ສົນໃຈສາມາດພົວພັນຮັບ-ສົ່ງເອກະສານດ້ວຍຕົນເອງໄດ້ທີ່ **ຂະແໜງຫ້ອງການ-ບັນຊີ-ໄອທີ ຂອງ** ທຄຕລ ສາຂາອຸດົມໄຊ ສອບຖາມຂໍ້ມູນໂທ: **081 211260** ຫຼື ສາມາດດາວໂລດເອົາແບບຟອມສະໝັກວຽກໄດ້ທີ່ www.bcel.com.la ເຂົ້າໄປທີ່ສະໝັກງານ>ດາວໂຫຼດຟອມສະໝັກວຽກ.
2) ຕື່ມຂໍ້ມູນຟອມສະໝັກທີ່ດາວໂຫຼດ ແລະ ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:

- ✓ ຊີວະປະຫວັດເປັນເພົ່າ 4 ໜ້າ (ກາແດງ ແລະ ບໍ່ເກີນ 3 ເດືອນ)
- ✓ ຮູບຖ່າຍ 3x4 ຈຳນວນ 04 ໃບ (ບໍ່ເກີນ 3 ເດືອນ).
- ✓ ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວ.
- ✓ ສຳເນົາໃບປະກາດວິຊາສະເພາະ ແລະ ໃບຄະແນນ.
- ✓ ຄ່າທຳນຽມໃນການສະໝັກຈຳນວນ 10.000 ກີບ.
- ✓ ສຳເນົາໃບປະກາດ ມໍ ປາຍ.
- ✓ ໃບກວດສຸຂະພາບ (ກາແດງ ແລະ ບໍ່ເກີນ 6 ເດືອນ).
- ✓ ໃບຢັ້ງຢືນຄໍ້າປະກັນ (ກາແດງ ແລະ ບໍ່ເກີນ 3 ເດືອນ).
- ✓ ໃບແຈ້ງໂທດ (ກາແດງ ແລະ ບໍ່ເກີນ 3 ເດືອນ).
  ໃບຢັ້ງຢືນທີ່ຢູ່ (ກາແດງ ແລະ ບໍ່ເກີນ 3 ເດືອນ).

3) ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.
4) ໃນການສົ່ງຟອມສະໝັກວຽກຕ້ອງຖືໃບປະກາດວິຊາສະເພາະ ແລະ ໃບຄະແນນ ສະບັບຂອງແທ້ມາຢັ້ງຢືນນຳ.
5) ***ກຳນົດເລີ່ມແຈກ-ຮັບ ເອກະສານສະໝັກຕັ້ງແຕ່ ວັນທີ 26/03/2018-13/04/2018.***

ອຸດົມໄຊ, ວັນທີ 23/03/2018

ຫົວໜ້າທະນາຄານການຄ້າຕ່າງປະເທດລາວ
ມະຫາຊົນ
ສາຂາອຸດົມໄຊ

ສົມສຸກ ດວງຄາລາ